ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 104 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 31.5.2017.

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປັບປຸງເນື້ອໃນ ມາດຕາ 41 ແລະ 42 ກົດໝາຍວ່າດ້ວຍ ການເລືອກຕັ້ງ ສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2015)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ( ສະບັບປັບປຸງ ປີ 2015 );
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 01/ສພຊ, ລົງວັນທີ 12 ພຶດສະພາ 2017 ກ່ຽວກັບການປັບປຸງເນື້ອໃນບາງມາດຕາຂອງກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 06/ຄປຈ ລົງວັນທີ 12 ພຶດສະພາ 2017.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ :**

ມາດຕາ 1 ປະກາດໃຊ້ມາດຕາ 41 ແລະ 42 ປັບປຸງ ຂອງກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2015).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ສະພາແຫ່ງຊາດ** ເລກທີ 01 /ສພຊ

**ນະຄອນຫຼວງວຽງຈັນ, ວັນທີ** 12 / 05 / 17

# ມະຕິ

## ກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການປັບປຸງເນື້ອໃນບາງມາດຕາຂອງກົດໝາຍວ່າດ້ວຍ ການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ

ອີງຕາມມາດຕາ 53 ຂໍ້ 1 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປີ 2015);

ອີງຕາມມາດຕາ 11 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ (ສະບັບປີ 2015).

ໂດຍອີງໃສ່ການຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຂອງສະມາຊິກສະພາແຫ່ງຊາດ ກ່ຽວກັບ ການສະເໜີປັບປຸງເນື້ອໃນມາດຕາ 41 ແລະ 42 ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປີ 2015) ໃນວາລະກອງປະຊຸມ ຄັ້ງວັນທີ 2 ພຶດສະພາ ປີ 2017.

### ສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາການປັບປຸງເນື້ອໃນມາດຕາ 41 ແລະ 42 ມີລະອຽດ ດັ່ງນີ້:

1. **ມາດຕາ 41 (ປັບປຸງ) ການເລືອກຕັ້ງແທນ**

   ການເລືອກຕັ້ງແທນຈະໄດ້ຈັດຂຶ້ນໃນກໍລະນີ ດັ່ງນີ້:

   ຈຳນວນສະມາຊິກສະພາແຫ່ງຊາດ ຫຼື ສະມາຊິກສະພາປະຊາຊົນຂັ້ນແຂວງ ຫາກຫຼຸດລົງ ອັນເນື່ອງມາຈາກກໍລະນີ ເສຍຊີວິດ, ລາອອກ ຫຼື ຖືກປົດອອກຈາກການເປັນສະມາຊິກສະພາ.

   **ສຳລັບສະມາຊິກສະພາແຫ່ງຊາດ:**

   ຈຳນວນສະມາຊິກສະພາແຫ່ງຊາດ ທີ່ໄດ້ຮັບການເລືອກຕັ້ງໃນສະພາແຫ່ງຊາດຊຸດນັ້ນ ຫາກຫຼຸດລົງຕ່ຳ

ກວ່າ ຈຳນວນຄົດໄລ່ໃສ່ພົນລະເມືອງທົ່ວປະເທດ ຫ້າສິບພັນຄົນໃດ ໃຫ້ມີສະມາຊິກສະພາແຫ່ງຊາດ ໜຶ່ງຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂໍ້ 3 ຂອງກົດໝາຍສະບັບນີ້.

ຈຳນວນສະມາຊິກສະພາແຫ່ງຊາດ ໃນເຂດເລືອກຕັ້ງໃດໜຶ່ງ ຫາກຫຼຸດລົງກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດໃນເຂດເລືອກຕັ້ງດັ່ງກ່າວ.

**ສຳລັບສະມາຊິກສະພາປະຊາຊົນຂັ້ນແຂວງ:**

ຈຳນວນສະມາຊິກສະພາປະຊາຊົນ ໃນແຂວງໃດໜຶ່ງ ຫຼື ນະຄອນຫຼວງ ຫາກຫຼຸດລົງ ຕ່ຳກວ່າຈຳນວນຄົດໄລ່ໃສ່ພົນລະເມືອງ ຫ້າສິບພັນຄົນໃດ ໃຫ້ມີສະມາຊິກສະພາປະຊາຊົນຂັ້ນແຂວງ ໜຶ່ງຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂໍ້ 5 ຂອງກົດໝາຍສະບັບນີ້.

ຈຳນວນສະມາຊິກສະພາປະຊາຊົນຂັ້ນແຂວງ ໃນເຂດເລືອກຕັ້ງເມືອງໃດໜຶ່ງ ຫາກຫຼຸດລົງກວ່າເຄິ່ງໜຶ່ງຂອງຈຳນວນສະມາຊິກສະພາປະຊາຊົນທັງໝົດໃນເຂດເລືອກຕັ້ງເມືອງດັ່ງກ່າວ.

ອາຍຸການຂອງສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ຍັງເຫຼືອຢ່າງໜ້ອຍ ສາມ ປີ.

2. ມາດຕາ 42(ປັບປຸງ) ວິທີການເລືອກຕັ້ງແທນ

ການເລືອກຕັ້ງແທນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ດຳເນີນດັ່ງນີ້:

1. ການເລືອກຕັ້ງແທນ ຈະໄດ້ຈັດຂຶ້ນ ສະເພາະແຕ່ເຂດເລືອກຕັ້ງທີ່ມີຈຳນວນສະມາຊິກສະພາແຫ່ງຊາດ ຫຼື ສະມາຊິກສະພາປະຊາຊົນຂັ້ນແຂວງ ຫຼຸດລົງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂອງກົດໝາຍສະບັບນີ້;
2. ການດຳເນີນການເລືອກຕັ້ງແທນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;
3. ຄະນະປະຈຳສະພາທີ່ກ່ຽວຂ້ອງ ເປັນຜູ້ຕົກລົງແຕ່ງຕັ້ງຄະນະກຳມະການເລືອກຕັ້ງ ແລະ ກຳນົດວັນເລືອກຕັ້ງ;
4. ພາຍຫຼັງການເລືອກຕັ້ງແທນສຳເລັດແລ້ວ ໃຫ້ຄະນະກຳມະການເລືອກຕັ້ງລາຍງານຜົນສຳເລັດຂອງການເລືອກຕັ້ງ ຕໍ່ກອງປະຊຸມສະພາທີ່ກ່ຽວຂ້ອງຄັ້ງຖັດໄປ ເພື່ອຮັບຮອງ.

**ມາດຕາ 2** ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້